ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**********************

ສະມາຄົມມິດຕະພາບ ລາວ -ຍີ່ປຸ່ນ ສູນກາງ

ເລກທີ 01 /ສມລ-ຍ

ນະຄອນຫຼວງວຽງຈັນ,ວັນທີ 8/4/2009

**ຂໍ້ຕົກລົງ**

**ຂອງປະທານສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ**

**ວ່າດ້ວຍການແຕ່ງຕັ້ງຄະນະສະມາຄົມອະດີດນັກສຶກສາລາວ**

**ຈາກ ປະເທດຍີ່ປຸ່ນ ຊຸດທີ III**

ອີງຕາມແຈ້ງການຂອງຫ້ອງວ່າການສູນກາງພັກ ສະບັບເລກທີ 629/ຫສພ,ລົງວັນທີ 05 ທັນວາ 1997 ກ່ຽວກັບການສ້າງຕັ້ງສະມາຄົມມິດຕະພາບ ລາວ-ຍີ່ປຸ່ນຢູ່ຂັ້ນແຂວງ ແລະກຳແພງນະຄອນວຽງຈັນ,

ອີງຕາມໃບສະເໜີຂອງສະມາຄົມອະດີດນັກສຶກສາລາວຈາກປະເທດຍີ່ປຸ່ນ ສະບັບເລກທີ 01-09/ສອລຍ ລົງວັນທີ 6 / 3/ 2009 ວ່າດ້ວຍການຂໍສະເໜີແຕ່ງຕັ້ງຄະນະບໍລິຫານສະມາຄົມອະດີດນັກສຶກສາລາວຈາກປະເທດຍີ່ປຸ່ນຊຸດທີ III,

**ປະທານສະມາຄົມມິດຕະພາບ ລາວ -ຍີ່ປຸ່ນ ສູນກາງຕົກລົງ**

ມາດຕາ1: ແຕ່ງຕັ້ງປະທານ, ຮອງປະທານ,ກຳມະການ,ເລຂານຸການ ສະມາຄົມອະດີດນັກ ສຶກສາລາວຈາກ ປະເທດຍີ່ປຸ່ນ ຊຸດທີ III ຊຶ່ງປະກອບດ້ວຍບັນດາທ່ານດັ່ງນີ້:

1.1.ທ່ານ ປັນຍາ ຈັນທະວົງ, ວ່າການພະແນກປະເມີນຄຸນນະພາບ, ສູນຮັບປະກັນຄຸນນະພາບການສຶກສາ,ກະຊວງສຶກສາທິການ ເປັນປະທານ.

1.2.ທ່ານ ບັນດາໄຊ ລໍວັນໄຊ, ຄະນະອຳນວຍການ, ບໍລິສັດບີລາວ,ເປັນຮອງປະທານຜູ້ທີ 1.

1.3.ທ່ານ ດຣ ບຸນລ້ອນ ດ້ວງເງິນ, ຮອງອຳນວຍການ, ສູນຮ່ວມມືດ້ານຊັບພະຍາກອນມະນຸດ ລາວ-ຍີ່ປຸ່ນ, ມະຫາວິທະຍາໄລແຫ່ງຊາດ, ເປັນຮອງປະທານ ຜູ້ທີ 2.

1.4.ທ່ານນາງ ປາລີນາ ເພັດສີລີແສງ, ອຳນວຍການກຸ່ມເຮືອນພັກວິນລາຫາດຫຼວງ, ເປັນຄະນະຝ່າຍພົວພັນຍີ່ປຸ່ນ.

1.5.ທ່ານນາງ ບົວສອນ ວົງຖາວອນ, ຜູ້ຮັບຜິດຊອບຄຸນນະພາບດ້ານບໍລິການ ບໍລິສັດ ການເງິນ ເວັດສະເຕີນຢູນຽນ,ເປັນຄະນະຝ່າຍບັນຊີ.

1.6.ທ່ານ ມິດທະວີສຸກ ລັດຕະນະ, ຜູ້ບໍລິຫານໂຄງການ, ອົງການສະຫະປະຊາຊາດ, ເປັນຄະນະຝ່າຍກິດຈະກຳ.

1.7.ທ່ານ ອາໂນລັກ ຈັນປະສິດ, ຜູ້ປະສານງານໂຄງການ, ອົງການໄຈກ້າ, ເປັນຄະນະຝ່າຍປະຊາສຳພັນ.

1.8.ທ່ານນາງ ເພັດມະນີວອນ ທັດຕະມະນີວົງ, ຜູ້ປະສານງານຫ້ອງການ ໄຈກາ ກາເຟ, ເປັນຄະນະຝ່າຍປະຊາສຳພັນ.

1.9.ທ່ານນາງ ສາລີພອນ ອຸດທະຈັກ, ວິຊາການສູນສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ, ກະຊວງສຶກສາທິການ,ເປັນເລຂານຸການ.

**ມາດຕາ 2**: ສະມາຄົມອະດີດນັກສຶກສາລາວຈາກປະ ເທດຍີ່ປຸ່ນແມ່ນເປັນສະມາຊິກລວມໝູ່ຂອງ ສະມາຄົມມິດຕະພາບ ລາວ-ຍີ່ປຸ່ນສູນກາງ.

**ມາດຕາ 3**: ສະເໜີມາຍັງການຈັດຕັ້ງພັກ -ລັດ,ເອກະຊົນ ແລະຜູ້ທີ່ໄດ້ຮັບການແຕ່ງຕັ້ງຈົ່ງຮັບຮູ້ ແລະປະຕິບັດຕາມຂໍ້ຕົກລົງສະບັບນີ້ຈົນກວ່າຈະມີການປ່ຽນແປງ.

**ມາດຕາ 4**: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ສ່ວນເອກະສານອື່ນໆທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກລົບລ້າງ.

ປະທານສະມາຄົມມິດຕະພາບ ລາວ-ຍີ່ປຸ່ນສູນກາງ

ສະມາຄົມ ມິດຕະພາບ ລາວ-ຍີ່ປຸ່ນ

ດຣ. ປອນເມກ ດາລາລອຍ